ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ເລກທີ 1598/ກປຈ
ນະຄອນຫຼວງວຽງຈັນ, ວັນທີ 5 ພະຈິກ 2026

ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ ພາຫະນະ ປະເພດລົດໃຫຍ່ໄຟຟ້າ (EV) ຈຳນວນ 01 ຄັນ, ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສຳລັບການສະໜອງພາຫະນະເປັນປະເພດລົດໃຫຍ່ໄຟຟ້າ (EV) ຈຳນວນ 01 ຄັນ, ເພື່ອປະກອບເປັນລົດຮັບໃຊ້ວຽກງານບໍລິຫານຂອງ ອົງການປະກັນສັງຄົມແຫ່ງຊາດ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ກຳນົດເວລາໃນການມອບ-ຮັບລົດແມ່ນພາຍໃນ 30 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຊື້ຊອງປະມູນໄດ້ທີ່ ໃນລະບົບ ເອເລັກໂຕນິກ ກະຊວງການເງິນ; ລາຄາຊອງປະມູນແມ່ນ 3,000,000 ກີບ/ຊອງ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 05 ພະຈິກ 2026 ຫາ 25 ພະຈິກ 2026. ໃນລາຄາ 3,000,000 ກີບ/ຊອງ, ວິທີການຊຳລະແມ່ນຈ່າຍຜ່ານລະບົບ QR ໃນລະບົບການຈັດຊື້ແບບເອເລັກໂຕນິກ E-PP, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງໃນລະບົບການຈັດຊື້ແບບເອເລັກໂຕນິກກ່ອນເວລາ 09:00 ໂມງ ຂອງວັນທີ 25 ພະຈິກ 2026. ເອກະສານປະມູນທຸກໆຊອງຈະໄດ້ເປີດໃນວັນທີ 25 ພະຈິກ 2026 ເວລາ 09:00 ໂມງ, ໂດຍຊ້ອງໜ້າຄະນະກຳມະການປະ ມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມຜ່ານໃນ ລະບົບ ເອເລັກໂຕນິກ ກະຊວງການເງິນ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.
6. ທຸກຊອງປະມູນແມ່ນນຳໃຊ້ການຄ້ຳປະກັນດ້ວຍກຽດ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄອນດ້ວຍ.

ຫົວໜ້າກົມ
(ຕາງໜ້າຄະນະຮັບຜິດຊອບ)

ສົມບູນ ແກ່ນປະເສີດ
Somboun KENPASEUTH

Scanned with CamScanner